# ພັນທະສັນຍາທີ່ພູເຂົາຊີນາຍ





ບົດທີ 8 ສຳລັບສະບາໂຕທີ 23 ສິງຫາ, 2025


“ພວກເຈົ້າໄດ້ເຫັນສິ່ງທີ່ເຮົາໄດ້ເຮັດຕໍ່ຊາວ
ເອຢິບ ແລະ ທັງໄດ້ເຫັນເຮົານຳເອົາພວກ
ເຈົ້າຂຶ້ນມາທີ່ນີ້ ໃກ້ຊິດເຮົາຢ່າງໃດ ກໍດັ່ງ
ນົກອິນຊີໃຊ້ປີກຍົກລູກຂອງຕົນຂຶ້ນຂີ່ຫລັງ”
ອພຍ 19:4–6,

ການຂ້າມທະເລແດງຖືເປັນເຫດການຫລັກອັນສຳຄັນຂອງຊາວອິດສະຣາເອນ. ເຫດການຫລັກອັນສຳຄັນອີກປະການໜຶ່ງແມ່ນ ການປະກາດພຣະບັນຍັດຂອງພຣະອົງ.

ໃນຂະນະນັ້ນ, ອິດສະຣາເອນໄດ້ຖືກຳເນີດຂຶ້ນປຽບເໝືອນຊົນຊາດອັນບໍຣິສຸດ. ເພາະໄດ້ຮັບກົດບັນຍັດ ແລະ ກົດເກນຕ່າງໆໃນການດຳເນີນຊີວິດ.

ແຕ່ກົດເຫລົ່ານັ້ນບໍ່ໄດ້ເປັນພຽງກົດໝາຍທາງສາສະໜາ, ກົດໝາຍແຫ່ງ, ຫລືກົດກ່ຽວກັບສຸຂະພາບແຕ່ເທົ່ານັ້ນ. ພຣະບັນຍັດ 10 ປະການ ເປັນຮາກຖານຂອງກົດທັງໝົດເຊິ່ງສະທ້ອນເຖິງພຣະລັກສະນະຂອງພຣະອົງຢ່າງແທ້ຈິງ, ເພາະສະນັ້ນພຣະບັນຍັດຂອງພຣະອົງບໍ່ໄດ້ມີໃຫ້ສະເພາະຄົນອິດສະຣາເອນປະຕິບັດຕາມເທົ່ານັ້ນ ແຕ່ລວມໄປເຖິງບຸດຂອງພຣະເຈົ້າທຸກໆຄົນ.





## ການສົ່ງມອບພຣະບັນຍັດ:

- ຜູ້ທີ່ຮັບພຣະບັນຍັດ (ອພຍ 19:1-8)
- ຜູ້ທີ່ປະທານພຣະບັນຍັດໃຫ້ (ອພຍ 19:9-25)
- ພຣະບັນຍັດ 10 ປະການ (ອພຍ 20:1-17)

## ຄວາມໝາຍຂອງພຣະບັນຍັດ:

- ບົດບາດຂອງພຣະບັນຍັດ.
- ພຣະບັນຍັດເປັນດັ່ງພຣະສັນຍາ.
- ພຣະບັນຍັດປຽບເໝືອນຈຸດໝາຍປາຍທາງ.



# ການສົ່ງມອບພຣະບັນຍັດ

# ຜູ້ທີ່ຮັບພຣະບັນຍັດ

"ພວກເຈົ້າໄດ້ເຫັນສິ່ງທີ່ເຮົາເຮັດຕໍ່ຊາວເອຢິບ ແລະ ທັງໄດ້ເຫັນເຮົານຳເອົາພວກເຈົ້າຂຶ້ນມາທີ່ນີ້ໃກ້ຊິດເຮົາຢ່າງໃດ ກໍດັ່ງນົກອິນຊີໃຊ້ປີກຍົກລູກຂອງຕົນຂຶ້ນຂີ່ຫລັງ" (ອພຍ 19:4)



ເປັນຫຍັງພຣະເຈົ້າຈຶ່ງຊົງນຳຊົນຊາດອິດສະຣາເອນອອກມາຈາກປະເທດເອຢິບ?

ເພື່ອຮັບໃຊ້ພຣະອົງ (ອພຍ. 5:1; 7:16; 8:1, 20; 9:1, 13; 10:3). ໃນການເຮັດແບບນີ້, ພວກເຂົາຈະໄດ້ພຣະພອນຫລາຍ (ດິນແດນຄານາອານ).

ໃນເດືອນທີ 3 ຫລັງຈາກອອກມາຈາກປະເທດເອຢິບ, ພວກເຂົາໄດ້ຕັ້ງແຄ້ມຢູ່ໃກ້ກັບພູເຂົາຊີນາຍ. ຢູ່ທີ່ນັ້ນເປັນເໝືອນກັບຮາກຖານສຳລັບການສ້າງຊົນຊາດອິດສະຣາເອນ. ພຣະເຈົ້າຊົງສະເໜີພັນທະສັນຍາໃຫ້ກັບພວກເຂົາ, ແລະ ພວກເຂົາກໍ່ຍອມຮັບເອົາ (ອພຍ. 19:1-8).

ໂດຍການຍອມປະຕິບັດຕາມພັນທະສັນຍາ, ຊົນຊາດອິດສະຣາເອນຈະເປັນແບບໃດ?(ອພຍ. 19:5-6)?

**ຊົນຊາດທີ່ບໍຣິສຸດ**

ພວກເຂົາຈະອຸທິດຕົນໃຫ້ກັບພຣະເຈົ້າ, ແລະສະແດງເຖິງພຣະລັກສະນະຂອງພຣະອົງ

**ອານາຈັກແຫ່ງປະໂລຫິດ**

ພວກເຂົາຈະເປັນຕົວແທນທີ່ເຊື່ອມຜູ້ຄົນອື່ນໆຫາພຣະເຈົ້າ, ແລະ ສອນພວກເຂົາກ່ຽວກັບພຣະບັນຍັດ

**ເປັນເໝືອນຊັບສົມບັດທີ່ມີຄ່າຂອງພຣະເຈົ້າ**

ພຣະເຈົ້າຈະຊົງໃຫ້ອິດສະຣາເອນເປັນເໝືອນກັບຊ່ອງທາງໃຫ້ຄວາມຮູ້ກ່ຽວກັບພຣະອົງ ແກ່ຊາວໂລກ

# ຜູ້ມອບພຣະບັນຍັດ

"ພູເຂົາຊີນາຍທັງໝ່ອຍມີຄວັນປົກຄຸມຢູ່ ເພາະພຣະເຈົ້າຢາເວໄດ້ສະເດັດລົງມາໃນໄຟທີ່ເທິງພູນັ້ນ. ສະນັ້ນຄວັນທີ່ພຸ່ງຂຶ້ນມາ ຈຶ່ງຄືຄວັນທີ່ອອກມາຈາກເຕົາໄຟອັນໃຫຍ່ ແລະ ພູເຂົາທັງໝ່ອຍກໍສະທ້ານຫວັ່ນໄຫວຢ່າງໜັກ" (ອພຍ 19:18)



ການປະທານພຣະບັນຍັດຂອງພຣະເຈົ້າທີ່ພູເຂົາຊີນາຍນັ້ນຍິ່ງໃຫຍ່ ແລະ ເປັນຕາຢ້ານ (ຮລ. 12:18-21). ບໍ່ມີໃຜກຽມພ້ອມກັບການຜະເຊີນເຫດການແບບນີ້. ເພາະສະນັ້ນ, ຜູ້ຄົນຕ້ອງຈຳເປັນໄດ້ຊຳລະຕົນໃຫ້ບໍຣິສຸດລ່ວງໜ້າ ແລະ ຮັກສາໄລຍະຫ່າງໃຫ້ເໝາະສົມ ເພື່ອບໍ່ໃຫ້ຖືກພຣະສິລິຂອງພຣະເຈົ້າເຜົາຜານ (ອພຍ. 19:10-12).

## ເປັນຫຍັງພຣະເຈົ້າຈຶ່ງຕ້ອງເຮັດເປັນພິທີອັນຍິ່ງໃຫຍ່ແບບນີ້?

ພຣະວັດຈະນະທີ່ພຣະເຈົ້າກຳລັງຈະກ່າວແກ່ພວກເຂົານັ້ນ ເປັນການສຳແດງພຣະລັກສະນະຂອງພຣະອົງເອງ. ການເຊື່ອຟັງພຣະບັນຍັດນັ້ນແມ່ນຊີວິດ; ການບໍ່ເຊື່ອຟັງພຣະບັນຍັດ ແມ່ນຄວາມຕາຍ. ອິດສະຣາເອນຈຳເປັນຕ້ອງໄດ້ຄຳນຶງເຖິງສິ່ງນີ້ໃຫ້ຫລາຍ ເຖິງຄວາມຮ້າຍແຮງ ແລະ ຄວາມສຳຄັນຂອງ ຖ້ອຍຄຳແຫ່ງພັນທະສັນຍາ ກໍ່ຄືພຣະບັນຍັດ 10 ປະການ" (ອພຍ. 34:28).



ພຣະບັນຍັດນີ້ຖືກບັນທຶກໄວ້ໂດຍຕອນ : ເຫລັ້ມທຳອິດແມ່ນໃນອົບພະຍົບ , ອີກບ່ອນໜຶ່ງແມ່ນກ່າວໄວ້ໃນຄຳກ່າວສຸດທ້າຍຂອງໂມເຊ.

ເຖິງວ່າຕອນທີ່ປະທານພຣະບັນຍັດໃຫ້ ອາດເບິ່ງເປັນຂັ້ນຕອນທີ່ເຂັ້ມງວດ: ແຕ່ພຣະບັນຍັດກໍ່ສະທ້ອນເຖິງພະລັກສະນະຂອງພຣະເຈົ້ານັ້ນກໍ່ຄື ຄວາມຮັກ (ໂຣມ. 13:10).



# ພຣະບັນຍັດ 10 ປະການ

“ເຮົາແມ່ນພຣະເຈົ້າຢາເວ ພຣະເຈົ້າຂອງເຈົ້າ ຜູ້ທີ່ໄດ້ນຳພາເຈົ້າອອກມາຈາກປະເທດເອຢິບ ບ່ອນທີ່ເຈົ້າຕົກເປັນທາດຮັບໃຊ້” (ອພຍ 20:2)

ພຣະເຈົ້າຊົງບອກແຈ້ງເຖິງພຣະບັນຍັດ ແລະໜ້າທີ່ຂອງພຣະບັນຍັດຊັດເຈນ: “ເຮົາໄດ້ໄຖ່ພວກເຈົ້າໃຫ້ພົ້ນຈາກບາບແລ້ວ, ເພາະສະນັ້ນ, ນີ້ແມ່ນສິ່ງທີ່ພວກເຈົ້າຈະຕ້ອງໄດ້ປະຕິບັດແຕ່ນີ້ເປັນຕົ້ນໄປ” (ອພຍ. 20:2). ສຳລັບພວກເຮົາແລ້ວ ການເຮັດຕາມພຣະບັນຍັດແມ່ນການຕອບແທນຕໍ່ການຊົງໄຖ່ບາບຂອງພຣະອົງ. ຈົ່ງເຮັດການຕອບແທນດ້ວຍຄວາມຮັກ ຕໍ່ຄວາມຮັກທີ່ໄດ້ຮັບ.



“ຄວາມຮັກແມ່ນການປະຕິບັດຕາມກົດບັນຍັດຢ່າງຄົບຖ້ວນ” (ໂຣມ. 13:10)

**ຮັກພຣະເຈົ້າ(ພບຍສ. 6:5; ອພຍ. 20:3-11)**

- ຈົ່ງຖວາຍກຽດແລະເຄົາລົບພຣະເຈົ້າໂດຍການໃຫ້ພຣະອົງເປັນທີ່ໜຶ່ງໃນຊີວິດ.
- ເຄົາລົບບູຊາພຣະອົງໂດຍບໍ່ຕ້ອງເອົາຮູບເຄົາລົບອັນໃດມາແທນພຣະອົງ
- ເຄົາລົບພຣນາມ, ຊື່ສຽງ ແລະ ພຣະລັກສະນະນິໄສຂອງພຣະອົງ
- ຖວາຍກຽດໃນວັນພັກຜ່ອນຂອງພຣະອົງແລະນະມັດສະການພຣະອົງ

**ຮັກເພື່ອນບ້ານ(ລບລວ. 19:18; ອພຍ. 20:12-17)**

- ເຄົາລົບພໍ່ແມ່
- ເຄົາລົບຊີວິດຄົນອື່ນໆ
- ເຄົາລົບຕໍ່ຄູ່ສົມຣົດ
- ເຄົາລົບຕໍ່ສິ່ງທີ່ເປັນຂອງຄົນອື່ນ
- ເຄົາລົບຕໍ່ຊື່ສຽງຂອງບຸກຄົນອື່ນ
- ເຄົາລົບຕໍ່ຕົນເອງ ບໍ່ໃຫ້ຄວາມປາຖະໜາຊົ່ວ ເຂົ້າມາໃນຈິດໃຈ



# ຄວາມໝາຍ
# ຂອງພຣະບັນຍັດ



# ໜ້າທີ່ຂອງພຣະບັນຍັດ

"ເພາະສະນັ້ນກົດບັນຍັດຈຶ່ງເປັນຜູ້ດູແລເບິ່ງແຍງພວກເຮົາ ຈົນກວ່າພຣະຄຣິດສະເດັດມາ ເພື່ອວ່າພວກເຮົາຈະໄດ້ເປັນຄົນຊອບທຳ ໂດຍທາງຄວາມເຊື່ອ" (ຄລຕ 3:24)

## ພຣະບັນຍັດມີໜ້າທີ່ຫຍັງແດ່?

ຮັກສາພວກເຮົາໃຫ້ພົ້ນຈາກຄວາມຊົ່ວ (ພສສ. 119:104)

ນຳພວກເຮົາໄປຫາພຣະເຢຊູ (ຄລຕ. 3:24)

ໃຫ້ສະຕິປັນຍາ (ພບຍສ. 4:6)



ໃຫ້ເຮົາເຫັນເຖິງຄວາມບາບຂອງພວກເຮົາ (Rom. 7:7)

ໃຫ້ອິດສະຫລະແກ່ພວກເຮົາ(ຢກບ 2:12)

ປະທານຄວາມຮຸ່ງເຮືອງໃຫ້ແກ່ພວກເຮົາ(ຢຊ. 1:8)

ມອບສັນຕິສຸກໃຫ້ແກ່ພວກເຮົາ (ພສສ. 119:165)

ຄວາມລອດບໍ່ແມ່ນໄດ້ຍ້ອນການປະຕິບັດພຣະບັນຍັດ(ຄລຕ. 2:16). ແຕ່ປຽບເໝືອນແວ່ນແຍງທີ່ສະທ້ອນໃຫ້ພວກເຮົາເຫັນຄວາມບາບຂອງພວກເຮົາ (ຢກບ 1 :23-25).

ການທຸບແວ່ນແຍງ ບໍ່ໄດ້ຊ່ວຍໃຫ້ກຳຈັດສິ່ງເປິະເປື້ອນອອກໄປໄດ້; ແລະ ການປ່ອຍປະລະເລີຍ ກໍ່ບໍ່ສາມາດເຮັດໃຫ້ແວ່ນສະອາດໄດ້ເຊັ່ນກັນ. ແຕ່ຖ້າບໍ່ມີແວ່ນແລ້ວ "ພຣະບັນຍັດ" ພວກເຮົາຄົງບໍ່ຮູ້ວ່າພວກເຮົາເປິະເປື້ອນ "ດ້ວຍບາບ" ແລະ ເຮົາຈຶ່ງຕ້ອງການສິ່ງທີ່ຈະກຳຈັດສິ່ງເປິະເປື້ອນຫລືຄວາມບາບນັ້ນ ສິ່ງນັ້ນກໍ່ຄື "ພຣະເຢຊູ"



ພຣະຄຳພີແມ່ນຊັດເຈນ: ພຣະບັນຍັດແມ່ນດີ (ໂຣມ. 7:12); ເປັນສິ່ງທີ່ໜ້າຊື່ນໃຈ (ພສສ. 1:2). "ຂ້ານ້ອຍຮັກກົດບັນຍັດຂອງພຣະອົງ! ຂ້ານ້ອຍພາວັນນາເຖິງກົດບັນຍັດຢູ່ຕະຫລອດວັນ" (ພສສ. 119:97).

# ພຣະບັນຍັດ ເປັນດັ່ງພຣະສັນຍາ

“ພຣະອົງໄດ້ບອກພວກເຈົ້າວ່າຕ້ອງເຮັດຢ່າງໃດ ເພື່ອຖືຮັກສາພັນທະສັນຍາ ທີ່ພຣະອົງໄດ້ເຮັດໄວ້ກັບພວກເຈົ້າ ຄືໃຫ້ພວກເຈົ້າໄດ້ປະຕິບັດຕາມພຣະຄຳສັ່ງສິບຂໍ້ທີ່ພຣະອົງໄດ້ຈາລຶກໄວ້ໃນຫີນສອງແຜ່ນ” (ພບຍສ 4:13,)




ໃນພາສາເຮັບເຣີ, ການເລົ່າເຖິງພຣະບັນຍັດສິບປະການສາມຄັ້ງນັ້ນ, ພວກເຂົາເອີ້ນວ່າ “*ຂໍ້ຄຳສັ່ງ ສິບປະການ*” (ອພຍ. 34:28; ພບຍສ. 4:13; ພບຍສ. 10:4).

ໃຫ້ພວກເຮົາຄິດເຖິງສິ່ງນີ້. ໝາຍຄວາມວ່າແນວໃດຖ້າເຮົາເວົ້າຕໍ່ຄົນອື່ນວ່າ “ເຮົາໃຫ້ຄຳໝັ້ນສັນຍາແກ່ທ່ານ”?

ໃນຄວາມເປັນຈິງ, ພວກເຮົາບໍ່ໄດ້ໃຫ້ພຣະອົງສິ່ງໃດເລີຍ; ແຕ່ສຳລັບພຣະອົງເມື່ອພຣະອົງສັນຍາແລ້ວ ພຣະອົງກໍລົງມືເຮັດສິ່ງນັ້ນທີ່ເປັນຮູບປະທຳ.

ດັ່ງນັ້ນ ໃນພາສາເຮັບເລີ ຄຳວ່າດາບາຣ໌“*dabar*” ສາມາດແປໄດ້ວ່າ “ຖ້ອຍຄຳ” ຫລື “ຄຳສັນຍາ”



ຕົວຢ່າງ: “ຄຳສັນຍາອັນດີງາມທີ່ພຣະອົງຊົງສັນຍາໄວ້ກັບໂມເຊນັ້ນ [*dabar*] ບໍ່ເຄີຍລົ້ມເຫລວແມ້ແຕ່ຂໍ້ດຽວ” (1 ກສ 8:56).

ພຣະບັນຍັດສິບປະການແມ່ນຄຳສັນຍາສິບປະການທີ່ພຣະເຈົ້າຊົງມອບໃຫ້ພວກເຮົາ, ເພື່ອນຳພວກເຮົາໄປສູ່ເສັ້ນທາງທີ່ຖືກຕ້ອງ

# ພຣະບັນຍັດປຽບດັ່ງຈຸດຈົບ

“ດ້ວຍວ່າພຣະຄຣິດໄດ້ເຮັດໃຫ້ກົດບັນຍັດຖືກຍົກເລີກ ເພື່ອວ່າຜູ້ທີ່ວາງໃຈເຊື່ອທຸກຄົນ ຈະໄດ້ເປັນຄົນຊອບທຳ” (ໂຣມ 10:4)



ຄຳວ່າ “ຈົບ” ທີ່ ອຈ ໂປໂລໄດ້ໃຊ້ໃນ 10:4 ແມ່ນ “*telos.*” ຄຳນີ້ມາຍຄວາມວ່າແນວໃດ?

ຄຳແປທົ່ວໄປແມ່ນ: ຈຸດບົ່ງຊີ້ເຖິງຂອບເຂດວັດຖຸປະສົງ. ຄວາມໝາຍອັນທີສອງແມ່ນ: ທາງອອກ, ຈຸດສິ້ນສຸດ, ຈຸດປະສົງ, ແລະ ຜົນລັບ ຄວາມໝາຍຂອງແຕ່ລະຄຳຕ້ອງຂື້ນກັບປະໂຫຍກທີ່ໃຊ້



ຖ້າວ່າພວກເຮົາແປວ່າ “ພຣະເຢຊູເປັນທີ່ສິ້ນສຸດຂອງພຣະບັນຍັດ,” ຈຶ່ງບໍ່ມີພຣະບັນຍັດອີກຕໍ່ໄປ. ເພາະສະນັ້ນ ຈຶ່ງບໍ່ມີຄວາມບາບ. ອຈ ໂປໂລ ເວົ້າຂັດແຍ້ງຕົນເອງບໍ? (ໂຣມ. 7:7).

ຖ້າພວກເຮົາແປວ່າ “ຈຸດທີ່ພຣະບັນຍັດເນັ້ນ (ຊີ້) ໄປຫາແມ່ນພຣະເຢຊູຄຣິດ” ກໍ່ສອດຄ້ອງກັບຄຳເວົ້າຂອງ ອຈ ໂປໂລ. ເພາະພຣະບັນຍັດ ນຳພວກເຮົາໄປຫາພຣະເຢຊູຄຣິດ (ໂຣມ. 3:31; ຄລຕ. 3:24).

EGW (Patriarchs and Prophets, p. 305)

“ພຣະບັນຍັດບໍ່ໄດ້ກ່າວໄວ້ ເພື່ອໃຊ້ສຳລັບປະໂຫຍດຂອງຊາວເຮັບເຣີເທົ່ານັ້ນ. ພຣະເຈົ້າຊົງໃຫ້ກຽດພວກເຂົາໂດຍແຕ່ງຕັ້ງໃຫ້ເປັນຜູ້ພິທັກ ແລະ ຮັກສາພຣະບັນຍັດຂອງພຣະອົງ, ແຕ່ພຣະບັນຍັດນັ້ນແມ່ນເພື່ອມະນຸດໂລກທັງໝົດ. ຄຸນນະທຳຂອງພຣະບັນຍັດແມ່ນທຸກຄົນສາມາດເຂົ້າເຖິງໄດ້, ແລະ ພຣະອົງຊົງປະທານໄວ້ເພື່ອເປັນຄຳສອນ ແລະ ການປົກຄອງແກ່ທຸກຄົນ. ພຣະບັນຍັດສິບປະການນັ້ນສັ້ນ, ກະທັດຮັດ ແຕ່ມີອຳນາດ ຄອບຄຸມໃນຄວາມຮັບຜິດຊອບຂອງມະນຸດຕໍ່ພຣະເຈົ້າ ແລະ ຕໍ່ມະນຸດດ້ວຍກັນ. ທັງໝົດນັ້ນຕ້ອງຢູ່ບົນພື້ນຖານແຫ່ງຄວາມຮັກ.